ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ເລກທີ: 168 /ສວສ

ນະຄອນຫຼວງວຽງຈັນ, ວັນທີ: 21 NOV 2024

# ແຈ້ງການ

**ເຖິງ:** - ທ່ານ ອະທິການບໍດີ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ

- ທ່ານ ຄະນະບໍດີ ຄະນະທັນຕະແພດສາດ

**ເລື່ອງ:** ການກະກຽມ ແລະ ຈັດຕັ້ງປະຕິບັດການສອບເສັງລະດັບຊາດ ສໍາລັບທັນຕະແພດຈົບໃໝ່.

- ອີງຕາມ ຍຸດທະສາດວ່າດ້ວຍລະບົບການອອກໃບອະນຸຍາດປະກອບວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນຜູ້ປະກອບວິຊາຊີບປິ່ນປົວ ຂອງ ສປປ ລາວ ແຕ່ປີ 2016-2025 ເລກທີ 2098/ສທ, ລົງວັນທີ 03 ທັນວາ 2015;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດຈັດຕັ້ງການສອບເສັງລະດັບຊາດສໍາລັບວິຊາຊີບທັນຕະແພດ ເລກທີ 083/ສວສ, ລົງວັນທີ 3 ກັນຍາ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການສອບເສັງລະດັບຊາດ ສໍາລັບທັນຕະແພດ ເລກທີ 135/ສວສ, ລົງວັນທີ 16 ຕຸລາ 2024.

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຈະໄດ້ກະກຽມ ຈັດການສອບເສັງລະດັບຊາດ ສໍາລັບທັນຕະແພດຈົບໃໝ່ ໃນວັນທີ 21-22 ທັນວາ 2024, ເພື່ອເຮັດໃຫ້ການກະກຽມ ແລະ ຈັດຕັ້ງປະຕິບັດການສອບເສັງລະດັບຊາດຄັ້ງນີ້ ດໍາເນີນໄປຕາມແຜນການ ຈຶ່ງຂໍຄວາມຮ່ວມມືຊ່ວຍເຫຼືອມາຍັງທ່ານເພື່ອ:

1. ກະກຽມສະຖານທີ່ສອບເສັງ: ຫ້ອງສໍາລັບກໍາມະການຮັບຜິດຊອບການສອບເສັງ, ຫ້ອງສໍາລັບສອບເສັງ;
2. ແຈ້ງໃຫ້ ທັນຕະແພດຈົບໃໝ່ ປີ 2022-2023, ຜູ້ທີ່ບໍ່ມາສອບເສັງ, ຜູ້ທີ່ສອບເສັງບໍ່ຜ່ານ ແລະ ຜູ້ທີ່ຈົບມາຈາກຕ່າງປະເທດ ມາລົງທະບຽນ ແລະ ເຂົ້າຮ່ວມການສອບເສັງລະດັບຊາດ ຕາມວັນເວລາ ແລະ ສະຖານທີ່ ທີ່ກໍານົດໄວ້, ເຊິ່ງຈະໄດ້ເປີດຮັບສະໝັກແຕ່ວັນທີ 02 ທັນວາ 2024 ແລະ ປິດຮັບສະໝັກການສອບເສັງໃນວັນທີ 6 ທັນວາ 2024 ແລະ ວັນທີ 11-18 ທັນວາ 2024 ໃຫ້ມາພິມພັນເອົາບັດເຂົ້າຫ້ອງສອບເສັງ ;
3. ແຈ້ງໃຫ້ນັກສອບເສັງ ກະກຽມອຸປະກອນທີ່ໃຊ້ໃນການສອບເສັງເຊັ່ນ: ບິກສີຟ້າ, ສໍດໍາ 2B ແລະ ນໍ້າລຶບຂາວມາພ້ອມ;
4. ສໍາລັບການເກັບຄ່າລົງທະບຽນສະໝັກສອບເສັງ 350,000 ກີບ/ຄົນ (ລາຍລະອຽດປະສານງານ ນາງ ວົງເດືອນ ສະຫວັນສັກ ຜູ້ຮັບຜິດຊອບການເງິນ ເບີໂທ: 020 96624956).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການຂ້າງເທິງນີ້ດ້ວຍ.

ເຊັນແທນ ປະທານ

ກະຊວງສາທາລະນະສຸກ ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ສຈ ດຣ ຈັນເພັງ ທໍາມະວົງ


**ປະສານ ໂທ ແລະ ອອດແອັບ:**

ນາງ ວົງເດືອນ ສະຫວັນສັກ 966 24 956

ທ້າວ ບຸນປະສິດ ຄໍາກອງ 59 868 071